ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 1183 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 27 ມິຖຸນາ 2024

# ຂໍ້ຕົກລົງ
# ວ່າດ້ວຍລະບົບຂໍ້ມູນ ຂ່າວສານທີ່ດິນ

- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມໜັງສືສະເໜີຂອງກົມທີ່ດິນ ສະບັບເລກທີ 3012/ກຊສ.ກທດ, ລົງວັນທີ 11 ມິຖຸນາ 2024.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການ ແລະ ມາດຕະການກ່ຽວກັບການສ້າງ, ປັບປຸງ, ຄຸ້ມຄອງ, ຕິດຕາມ ກວດກາ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ຜ່ານລະບົບການສື່ສານຂໍ້ມູນ ຂ່າວສານທີ່ທັນສະໄໝ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ວຽກງານຄຸ້ມຄອງ-ບໍລິຫານທີ່ດິນ ຕາມທິດຫັນເປັນທັນສະໄໝ, ມີຄວາມວ່ອງໄວ, ປອດໄພ ແລະ ສາມາດເຊື່ອມໂຍງກັບລະບົບຂໍ້ມູນ ຂ່າວສານ ຂອງບັນດາກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

**ມາດຕາ 2 ລະບົບຂໍ້ມູນ ຂ່າວສານທີ່ດິນ**

ລະບົບຂໍ້ມູນ ຂ່າວສານທີ່ດິນ ແມ່ນ ເຄື່ອງມືພື້ນຖານອັນຈຳເປັນທີ່ນຳໃຊ້ເຕັກໂນໂລຊີທັນສະໄໝ ຮັບໃຊ້ໃຫ້ແກ່ການຄຸ້ມຄອງ ແລະ ບໍລິຫານທີ່ດິນ ເພື່ອຮັບປະກັນຄຸນນະພາບ, ຄວາມສະດວກ, ທັນການ, ວ່ອງໄວ ແລະ ຊັດເຈນ ໃນການນຳໃຊ້ຂໍ້ມູນ ຂ່າວສານທີ່ດິນ ເຂົ້າໃນວຽກງານທີ່ດິນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ລະບົບຂໍ້ມູນ ຂ່າວສານທີ່ດິນ ປະກອບມີລະບົບຂໍ້ມູນ ຂ່າວສານທີ່ດິນແຫ່ງຊາດ, ຖານຂໍ້ມູນ ຂ່າວສານທີ່ດິນຂັ້ນທ້ອງຖິ່ນ ແລະ ຖານຂໍ້ມູນ ຂ່າວສານທີ່ດິນ ຕາມຂະແໜງການ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລະບົບເຊີເວີ** ໝາຍເຖິງ ລະບົບຄອມພິວເຕີ ທີ່ມີຄວາມສາມາດສູງໃນການຈັດການວຽກງານ ໂດຍມີການເຊື່ອມຕໍ່ເຄືອຂ່າຍ ແລະ ບັນດາຊອບແວ, ໂປຣແກຣມຕ່າງໆ ເພື່ອໃຫ້ບໍລິການແກ່ຄອມພິວເຕີໜ່ວຍອື່ນ;

2. **ເຊີເວີຫຼັກ** ໝາຍເຖິງ ລະບົບເກັບຮັກສາຂໍ້ມູນ ຂ່າວສານທີ່ດິນ ຢ່າງລວມສູນຢູ່ໃນຂັ້ນສູນກາງ ເພື່ອໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ຕາມຂອບເຂດສິດຂອງຕົນ;

3. **ເຊີເວີສຳຮອງ** ໝາຍເຖິງ ເຊີເວີທີ່ສ້າງຂຶ້ນ ເພື່ອສຳຮອງຂໍ້ມູນ ຂ່າວສານທີ່ດິນ ຢ່າງລວມສູນຢູ່ໃນຂັ້ນສູນກາງ ເພື່ອປ້ອງກັນການສູນເສຍ ແລະ ນຳໃຊ້ຂໍ້ມູນ ຂ່າວສານດັ່ງກ່າວ ໃນເວລາເຊີເວີຫຼັກມີບັນຫາ ຫຼື ໃຊ້ການບໍ່ໄດ້;

4. **ເຊີເວີຂັ້ນແຂວງ** ໝາຍເຖິງ ເຊີເວີທີ່ສ້າງຂຶ້ນ ເພື່ອສຳຮອງຂໍ້ມູນ ຂ່າວສານທີ່ດິນ ຂອງຂັ້ນແຂວງ ເພື່ອປ້ອງກັນການສູນເສຍ ແລະ ນຳໃຊ້ຂໍ້ມູນ ຂ່າວສານດັ່ງກ່າວ ໃນເວລາເຊີເວີຫຼັກມີບັນຫາ ຫຼື ໃຊ້ການບໍ່ໄດ້;

5. **ລະບົບເຄືອຂ່າຍ** ໝາຍເຖິງ ລະບົບເຊື່ອມຕໍ່ຄອມພິວເຕີ ແລະ/ຫຼື ອຸປະກອນເອເລັກໂຕຣນິກອື່ນ ຜ່ານລະບົບສາຍສົ່ງແບບມີສາຍ ແລະ ບໍ່ມີສາຍ;

6. **ລະບົບການເຊື່ອມຕໍ່ໂປຣແກຣມ (Application Programming Interface API)** ໝາຍເຖິງ ກົນໄກທີ່ໃຫ້ລະບົບໂປຣແກມສອງລະບົບສາມາດສື່ສານກັນໄດ້;

7. **ມາດຕະການປ້ອງກັນລະບົບຖານຂໍ້ມູນທີ່ດິນ** ໝາຍເຖິງ ການນຳໃຊ້ເຄື່ອງມື ຫຼື ໂປຣແກຣມພິວເຕີພິເສດ ເພື່ອຕ້ານ ແລະ ສະກັດກັ້ນການເຂົ້າເຖິງລະບົບຖານຂໍ້ມູນ ຂ່າວສານທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ;

8. **ເວບເບດແອັດຄີເຄເຊິນ (Web base Application)** ໝາຍເຖິງ ໂປຣແກຣມທີ່ຂຽນຂຶ້ນມາເພື່ອເຮັດວຽກຢູ່ໃນເວບໄຊ ໂດຍເອີ້ນວ່າລະບົບອອນລາຍອິນເຕີເນັດ (Internet) ແລະ ອິນທຣາເນັດ (Intranet) ຜູ້ໃຊ້ສາມາດໃຊ້ງານຜ່ານ Browser ເຊັ່ນ Internet Explorer, Firefox, Google Chrome ເທິງອຸປະກອນຕ່າງໆ ເຊັ່ນ ຄອມພິວເຕີ, ແທບເລັດ, ມືຖື ແລະ ອື່ນໆ;

9. **ອອນລາຍ (Online)** ໝາຍເຖິງ ການສະແດງເຖິງສະຖານະການເຊື່ອມຕໍ່ກັບເຄືອຂ່າຍໃດໜຶ່ງ ຍົກຕົວຢ່າງການເຊື່ອມຕໍ່ກັບອິນເຕີເນັດເປັນຕົ້ນ;

10. **ລຽວທາມ (Real time)** ໝາຍເຖິງ ການແລກປ່ຽນຂໍ້ມູນລະຫວ່າງເຄື່ອງເຊີເວີ ແລະ ເຄື່ອງຄອມພິວເຕີ ໃນໄລຍະເວລາດຽວກັນ ໂດຍຜ່ານການເຊື່ອມຕໍ່ດ້ວຍລະບົບເຄືອຂ່າຍອິນເຕີເນັດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ໃນດິນແດນ ສປປ ລາວ.

## ໝວດທີ 2
## ລະບົບຂໍ້ມູນ ຂ່າວສານທີ່ດິນ ແຫ່ງຊາດ

**ມາດຕາ 5 ລະບົບຂໍ້ມູນ ຂ່າວສານທີ່ດິນ ແຫ່ງຊາດ**

ກົມທີ່ດິນ ຮັບຜິດຊອບໃນການສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ແຫ່ງຊາດ ເພື່ອເປັນບ່ອນອີງໃຫ້ແກ່ການເກັບລາຍຮັບທີ່ດິນຂອງຂະແໜງການເງິນ ແລະ ໃຫ້ເຊື່ອມຕໍ່ກັບລະບົບຂໍ້ມູນສະຖິຕິແຫ່ງຊາດ ໂດຍປະສານສົມທົບກັບກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ລະບົບຂໍ້ມູນ ຂ່າວສານທີ່ດິນ ແຫ່ງຊາດ ຕ້ອງເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງລວມສູນຢູ່ຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ລະບົບຖານຂໍ້ມູນ ຂ່າວສານທີ່ດິນ ແຫ່ງຊາດ ປະກອບມີຖານຂໍ້ມູນ ດັ່ງນີ້:

1. ຖານຂໍ້ມູນທະບຽນທີ່ດິນ;
2. ຖານຂໍ້ມູນປະເມີນລາຄາທີ່ດິນ
3. ຖານຂໍ້ມູນສຳຫຼວດ ວັດແທກ ແລະ ສ້າງແຜນທີ່ຕາດິນ;
4. ຖານຂໍ້ມູນການເຊົ່າ ແລະ ສຳປະທານທີ່ດິນຂອງລັດ;
5. ຖານຂໍ້ມູນ ແຜນຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນ.

ບັນດາຖານຂໍ້ມູນຂ້າງເທິງນີ້ ສາມາດເຊື່ອມໂຍງຫາກັນໄດ້ດ້ວຍການກຳນົດມາດຕະຖານ ໃນການສ້າງລະບົບການເຊື່ອມຕໍ່ໂປຣແກຣມ (Application Programming Interface API).

ກົມທີ່ດິນ ສາມາດວ່າຈ້າງບໍລິສັດ ຫຼື ຊ່ຽວຊານພາຍໃນ ແລະ ຕ່າງປະເທດ ເຂົ້າມາພັດທະນາກ່ຽວກັບການສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ແຫ່ງຊາດ ໂດຍການຕົກລົງເຫັນດີ ຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ ຕົກລົງຮັບຮອງລະບົບຂໍ້ມູນຂ່າວສານທີ່ດິນ ແຫ່ງຊາດ ຕາມການສະເໜີຂອງກົມທີ່ດິນ.

**ມາດຕາ 6 ຖານຂໍ້ມູນທະບຽນທີ່ດິນ**

ຖານຂໍ້ມູນທະບຽນທີ່ດິນ ແມ່ນ ຖານຂໍ້ມູນທີ່ນຳໃຊ້ເຂົ້າໃນວຽກງານຂຶ້ນສຳມະໂນທີ່ດິນ, ຂຶ້ນທະບຽນອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ, ການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ ແລະ ປະເມີນລາຄາທີ່ດິນ ດ້ວຍການບັນທຶກບັນດາຂໍ້ມູນຕົວອັກສອນ, ຂໍ້ມູນທາງດ້ານພູມີສາດ ແລະ ຂໍ້ມູນຮູບພາບ ທີ່ມີການເຊື່ອມໂຍງກັນ ແລະ ເກັບຮັກສາໄວ້ຢ່າງລວມສູນ ຊຶ່ງຖານຂໍ້ມູນທະບຽນທີ່ດິນ ສາມາດຄິດໄລ່ຄ່າທຳນຽມ ແລະ ຄ່າບໍລິການທີ່ດິນ ລວມທັງເຊື່ອມໂຍງກັບໂປຣແກຣມການເກັບອາກອນທີ່ດິນ ຫຼື ຄ່າທຳນຽມການນຳໃຊ້ທີ່ດິນ ຂອງຂະແໜງການເງິນ ແລະ ການທະນາຄານ.

ຂໍ້ມູນສຳມະໂນທີ່ດິນ ແມ່ນ ການເກັບກຳຂໍ້ມູນສະຖິຕິຕອນດິນປະເພດຕ່າງໆ ຕາມປຶ້ມສຳມະໂນທີ່ດິນຢູ່ແຕ່ລະບ້ານ ເພື່ອຕິດຕາມສະພາບການເຄື່ອນໄຫວ, ປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນ ແລະ ເປັນຂໍ້ມູນພື້ນຖານໃນການອອກໃບຕາດິນ ແລະ ເສຍຄ່າທຳນຽມການນຳໃຊ້ທີ່ດິນ ຕາມກົດໝາຍ.

ຂໍ້ມູນຂຶ້ນທະບຽນອອກໃບຕາດິນ ແມ່ນ ການເກັບກຳຂໍ້ມູນສະຖິຕິຕອນດິນປະເພດຕ່າງໆ ສະເພາະຕອນດິນທີ່ໄດ້ຂຶ້ນທະບຽນອອກໃບຕາດິນ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມກົດໝາຍ.

ຂໍ້ມູນການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ແມ່ນ ການເກັບກຳຂໍ້ມູນສະຖິຕິກ່ຽວກັບຕອນດິນ ທີ່ໄດ້ຮັບການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ເປັນຕົ້ນ ການເຊົ່າ, ເປັນຫຼັກຊັບຄ້ຳປະກັນ, ຂາຍຝາກ, ທາດສະພາບຕາມສັນຍາ, ສິດເໜືອທີ່ດິນ ແລະ ການເຄື່ອນໄຫວອື່ນ.

ຂໍ້ມູນການຈົດທະບຽນການປ່ຽນແປງສິດນຳໃຊ້ທີ່ດິນ ແມ່ນ ການເກັບກຳຂໍ້ມູນສະຖິຕິກ່ຽວກັບຕອນດິນ ທີ່ໄດ້ຮັບການປ່ຽນແປງສິດນຳໃຊ້ທີ່ດິນ ເປັນຕົ້ນ ການສືບທອດມູນມໍຣະດົກ, ຊື້ ຂາຍ, ເອົາເຂົ້າເປັນຮຸ້ນ, ມອບ ຫຼື ຍົກສິດນຳໃຊ້ທີ່ດິນ, ແລກປ່ຽນ, ຖອນ ຫຼື ໂອນສິດນຳໃຊ້ທີ່ດິນຄືນ, ທາດສະພາບຕາມກົດໝາຍ, ຄຳຕັດສິນຂອງສານ.

**ມາດຕາ 7 ຖານຂໍ້ມູນປະເມີນລາຄາທີ່ດິນ**

ຖານຂໍ້ມູນປະເມີນລາຄາທີ່ດິນ ແມ່ນ ການເກັບກຳຂໍ້ມູນສະຖິຕິກ່ຽວກັບລາຄາທີ່ດິນ ແຕ່ລະເຂດຢູ່ໃນແຕ່ລະທ້ອງຖິ່ນ ຕາມແຜນທີ່ເຂດປະເມີນລາຄາ ແລະ ຕາຕະລາງລາຄາປະເມີນທີ່ດິນ ທີ່ໄດ້ຮັບຮອງຈາກສະພາປະຊາຊົນຂັ້ນແຂວງ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ໄດ້ອອກຂໍ້ຕົກລົງວ່າດ້ວຍການປະເມີນລາຄາທີ່ດິນ ຕາມກົດໝາຍ.

**ມາດຕາ 8 ຖານຂໍ້ມູນສຳຫຼວດ ວັດແທກ ແລະ ສ້າງແຜນທີ່ຕາດິນ**

ຖານຂໍ້ມູນສຳຫຼວດ ວັດແທກທີ່ດິນ ແມ່ນ ຖານຂໍ້ມູນກ່ຽວກັບການສຳຫຼວດ ວັດແທກທີ່ດິນ ເປັນຕົ້ນ ຕຳແໜ່ງທີ່ຕັ້ງຂອງຕອນດິນ, ຂອບເຂດ, ໄລຍະຮອບຕອນດິນ, ຮູບຮ່າງ, ເນື້ອທີ່, ເສັ້ນທາງ, ແມ່ນ້ຳ, ຂໍ້ມູນອື່ນ.

ຖານຂໍ້ມູນການສ້າງແຜນທີ່ຕາດິນ ແມ່ນ ຖານຂໍ້ມູນກ່ຽວກັບການສຳຫຼວດ ວັດແທກ ເພື່ອສ້າງແຜນທີ່ຕາດິນ ຊຶ່ງສະແດງໃຫ້ເຫັນຕອນດິນຫຼາຍຕອນຢູ່ໃນແຜ່ນດຽວ. ແຜນທີ່ຕາດິນດັ່ງກ່າວ ປະກອບມີຂໍ້ມູນກ່ຽວກັບເລກທີແຜນທີ່ຕາດິນ, ເລກທີຕອນດິນແຕ່ລະຕອນ, ທີ່ຕັ້ງຂອງເຂດແດນຕອນດິນ, ເສັ້ນທາງ ແລະ ຮ່ອງນ້ຳ ພ້ອມທັງກຳນົດຂະໜາດ ແລະ ມາດຕາສ່ວນຂອງແຜນທີ່ ໂດຍນຳໃຊ້ໂປຣແກຣມລະບົບຂໍ້ມູນຂ່າວສານທາງດ້ານພູມສາດ ຊຶ່ງນຳໃຊ້ລະບົບ Datum UTM WGS 84 Zone 47 ແລະ 48 ເປັນຈຸດອ້າງອີງ.

**ມາດຕາ 9 ຖານຂໍ້ມູນການເຊົ່າ ແລະ ສຳປະທານທີ່ດິນຂອງລັດ**

ຖານຂໍ້ມູນການເຊົ່າ ແລະ ສຳປະທານ ທີ່ດິນຂອງລັດ ແມ່ນ ຖານຂໍ້ມູນກ່ຽວກັບການຂຶ້ນບັນຊີໂຄງການເຊົ່າ ແລະ ສຳປະທານທີ່ດິນຂອງລັດ ໃນການດຳເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ ຊຶ່ງຖານຂໍ້ມູນດັ່ງກ່າວສາມາດເຊື່ອມໂຍງກັບບັນດາກະຊວງ ແລະ ພະແນກການທີ່ກ່ຽວຂ້ອງ ຢູ່ຂັ້ນທ້ອງຖິ່ນ ເພື່ອນຳໃຊ້ເຂົ້າໃນການຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມສັນຍາ ແລະ ກົດໝາຍ.

ຖານຂໍ້ມູນການເຊົ່າ ແລະ ສຳປະທານ ທີ່ດິນຂອງລັດ ເປັນຮູບແບບ Web base Application, Online ແລະ ປ້ອນຂໍ້ມູນແບບ Real time ສາມາດບັນທຶກຂໍ້ມູນເປັນແບບຕົວອັກສອນ, ຮູບພາບ ແລະ ຂໍ້ມູນທາງພູມສາດ.

**ມາດຕາ 10 ຖານຂໍ້ມູນແຜນຈັດສັນທີ່ດິນ**

ຖານຂໍ້ມູນແຜນຈັດສັນທີ່ດິນ ແມ່ນ ຖານຂໍ້ມູນກ່ຽວກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ, ແຜນຈັດສັນທີ່ດິນຂັ້ນເມືອງ ແລະ ຂັ້ນບ້ານ ລວມທັງແຜນການນຳໃຊ້ທີ່ດິນຕາມຂະແໜງການ. ຖານຂໍ້ມູນດັ່ງກ່າວ ມີຂໍ້ມູນກ່ຽວກັບແຜນທີ່, ສະຖິຕິທີ່ດິນແຕ່ລະເຂດ ແລະ ແຕ່ລະປະເພດການນຳໃຊ້ທີ່ດິນ.

ຖານຂໍ້ມູນແຜນຈັດສັນທີ່ດິນ ສາມາດເຊື່ອມໂຍງຫາຖານຂໍ້ມູນການຄຸ້ມຄອງນຳໃຊ້ທີ່ດິນແຕ່ລະປະເພດ ຂອງບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຕິດຕາມຄວາມຄືບໜ້າໃນການຄຸ້ມຄອງນຳໃຊ້ທີ່ດິນແຕ່ລະປະເພດຕາມເປົ້າໝາຍການອະນຸລັກ ແລະ ເປົ້າໝາຍການພັດທະນາ ຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນທ້ອງຖິ່ນ. ຖ້າກໍລະນີມີການຫັນປ່ຽນປະເພດທີ່ດິນ ຫຼື ປ່ຽນເປົ້າໝາຍການນຳໃຊ້ທີ່ດິນແຕ່ລະປະເພດ ຕ້ອງໄດ້ຮັບອະນຸຍາດຕາມກົດໝາຍ ພ້ອມທັງດັດປັບຖານຂໍ້ມູນດັ່ງກ່າວ ໃຫ້ຖືກຕ້ອງຕາມຄວາມເປັນຈິງ.

## ໝວດທີ 3
## ຖານຂໍ້ມູນ ຂ່າວສານທີ່ດິນ
## ຂັ້ນທ້ອງຖິ່ນ ແລະ ຕາມຂະແໜງການນຳໃຊ້ທີ່ດິນ

**ມາດຕາ 11 ຖານຂໍ້ມູນ ຂ່າວສານທີ່ດິນ ຂັ້ນທ້ອງຖິ່ນ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ຮັບຜິດຊອບສ້າງຖານຂໍ້ມູນຂ່າວສານທີ່ດິນ ຫຼື ສາມາດຮ່ວມມືກັບພາກເອກະຊົນໃນການສ້າງຖານຂໍ້ມູນ ຂ່າວສານທີ່ດິນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ສອດຄ່ອງ ແລະ ເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານທີ່ດິນ ແຫ່ງຊາດ ຊຶ່ງປະກອບມີ ຖານຂໍ້ມູນທະບຽນທີ່ດິນ, ຖານຂໍ້ມູນສຳຫຼວດ ວັດແທກ ແລະ ສ້າງແຜນທີ່ຕາດິນ, ຖານຂໍ້ມູນການເຊົ່າ ແລະ ສຳປະທານ

ທີ່ດິນຂອງລັດ, ຖານຂໍ້ມູນແຜນຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນ ເພື່ອເປັນບ່ອນອີງໃຫ້ແກ່ການເກັບລາຍຮັບຈາກທີ່ດິນ ຂອງຂະແໜງການການເງິນ ແລະ ມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ.

ສຳລັບການແບ່ງຂັ້ນຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ໃຫ້ປະຕິບັດຕາມມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12 ຖານຂໍ້ມູນ ຂ່າວສານທີ່ດິນ ຕາມຂະແໜງການນຳໃຊ້ທີ່ດິນ**

ຖານຂໍ້ມູນ ຂ່າວສານທີ່ດິນ ຕາມຂະແໜງການນຳໃຊ້ທີ່ດິນ ແມ່ນ ຖານຂໍ້ມູນ ຂ່າວສານທີ່ດິນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຄຸ້ມຄອງທີ່ດິນແຕ່ລະປະເພດ ລວມທັງຂະແໜງການເງິນ ແລະ ທະນາຄານ ໃນການສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ຖານຂໍ້ມູນ ຂ່າວສານທີ່ດິນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກົມທີ່ດິນ ກຳນົດມາດຕະຖານໃນການສ້າງລະບົບການເຊື່ອມຕໍ່ໂປຣແກຣມ (Application Programming Interface API) ເພື່ອໃຫ້ຂະແໜງການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ສາມາດເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານທີ່ດິນແຫ່ງຊາດ ໂດຍອີງໃສ່ເງື່ອນໄຂທີ່ກົມທີ່ດິນກຳນົດໄວ້.

## ໝວດທີ 4
## ການຄຸ້ມຄອງລະບົບຂໍ້ມູນ ຂ່າວສານທີ່ດິນ

**ມາດຕາ 13 ການຄຸ້ມຄອງລະບົບຂໍ້ມູນ ຂ່າວສານທີ່ດິນ**

ການຄຸ້ມຄອງລະບົບຂໍ້ມູນ ຂ່າວສານທີ່ດິນ ແມ່ນ ການຄຸ້ມຄອງລະບົບໂປຣແກຣມຂໍ້ມູນ ຂ່າວສານທີ່ດິນ, ລະບົບເຊີເວີ (Server System) ແລະ ຜູ້ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ຢ່າງລວມສູນໃນຂອບເຂດທົ່ວປະເທດ ໂດຍມີການແບ່ງຂັ້ນຄຸ້ມຄອງແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ເພື່ອຮັບປະກັນຄວາມປອດໄພ, ຖືກຕ້ອງ, ຊັດເຈນ, ທັນສະໄໝ, ວ່ອງໄວ ແລະ ສາມາດກວດສອບໄດ້ ພ້ອມທັງຄຸ້ມຄອງລະບົບການເຊື່ອມໂຍງກັບລະບົບຂໍ້ມູນຂ່າວສານທີ່ດິນ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເຊັ່ນ ຖານຂໍ້ມູນແຕ່ລະປະເພດ, ການໃຫ້ບໍລິການຜ່ານເອເລັກໂຕຣນິກ, ການເກັບອາກອນຊື້ ຂາຍ ສິດນຳໃຊ້ທີ່ດິນ, ຄ່າທຳນຽມ, ຄ່າບໍລິການທີ່ດິນ ແລະ ອາກອນທີ່ດິນ ໂດຍຜ່ານລະບົບທະນາຄານ.

**ມາດຕາ 14 ການຄຸ້ມຄອງລະບົບໂປຣແກຣມຂໍ້ມູນ ຂ່າວສານທີ່ດິນ**

ການຄຸ້ມຄອງລະບົບໂປຣແກຣມຂໍ້ມູນ ຂ່າວສານທີ່ດິນ ແມ່ນ ການຄຸ້ມຄອງບັນດາໂປຣແກຣມ ທີ່ນຳໃຊ້ໃນລະບົບຂໍ້ມູນ ຂ່າວສານທີ່ດິນ ໃຫ້ນຳໃຊ້ໄດ້ຢ່າງເປັນປົກກະຕິ ເປັນຕົ້ນ ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ (Lao Land Reg), ໂປຣແກຣມຖານຂໍ້ມູນແຜນຈັດສັນທີ່ດິນ (LUIS), ໂປຣແກຣມຖານຂໍ້ມູນການເຊົ່າ ແລະ ສຳປະທານທີ່ດິນຂອງລັດ (LCIS) ດ້ວຍການປະເມີນ, ຕິດຕາມ ກວດກາ ບັນດາຊຸດຄຳສັ່ງໂປຣແກຣມນຳໃຊ້ (Source Code) ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບລະບົບໃນແຕ່ລະໄລຍະ ພ້ອມທັງມີການທົບທວນ, ປັບປຸງຊຸດຄຳສັ່ງໂປຣແກຣມນຳໃຊ້ດັ່ງກ່າວ ຢ່າງເປັນປົກກະຕິ ເພື່ອຮັບປະກັນຄວາມປອດໄພ ແລະ ຫຼຸດຜ່ອນຊ່ອງຫວ່າງຕ່າງໆ ທີ່ກໍໃຫ້ເກີດຄວາມສ່ຽງຕໍ່ລະບົບໂປຣແກຣມຂໍ້ມູນ ຂ່າວສານທີ່ດິນ.

**ມາດຕາ 15 ການຄຸ້ມຄອງລະບົບເຊີເວີ (Server System)**

ການຄຸ້ມຄອງລະບົບເຊີເວີ ແມ່ນ ການຄຸ້ມຄອງລະບົບເຊີເວີຫຼັກ, ລະບົບເຊີເວີສຳຮອງ, ລະບົບເຊີເວີຂັ້ນແຂວງ ເພື່ອໃຫ້ສາມາດເຊື່ອມຕໍ່ ແລະ ນຳໃຊ້ໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ ແລະ ສາມາດເຂົ້າເຖິງໄດ້.

ການຄຸ້ມຄອງລະບົບເຊີເວີ ໄດ້ແບ່ງຄວາມຮັບຜິດຊອບ ດັ່ງນີ້:

1. ກົມທີ່ດິນ ເປັນຜູ້ຄຸ້ມຄອງລະບົບເຊີເວີຫຼັກ (Server System) ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນໃນການຄຸ້ມຄອງ ແລະ ປົກປັກຮັກສາ ຢ່າງມີປະສິດທິພາບ ແນໃສ່ໃຫ້ຜູ້ນຳໃຊ້ຖານຂໍ້ມູນ ຂ່າວສານທີ່ດິນ ມີຄວາມສະດວກ, ວ່ອງໄວ ແລະ ສາມາດເຂົ້າເຖິງໄດ້;

2. ກົມທີ່ດິນ ເປັນຜູ້ຄຸ້ມຄອງລະບົບເຊີເວີສຳຮອງ (Backup Server system) ເພື່ອຮັບປະກັນໃຫ້ສາມາດນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ຢ່າງຕໍ່ເນື່ອງ ໃນກໍລະນີເຊີເວີຫຼັກເກີດມີບັນຫາຂັດຂ້ອງທາງດ້ານເຕັກນິກ;

3. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເປັນຜູ້ຄຸ້ມຄອງລະບົບເຊີເວີສຳຮອງຂັ້ນແຂວງ ຫຼື ຂັ້ນເມືອງ ຕາມການມອບໝາຍ ເພື່ອນຳໃຊ້ສຳຮອງຖານຂໍ້ມູນ ຂ່າວສານທີ່ດິນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ຮັບປະກັນໃຫ້ສາມາດນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ຢ່າງຕໍ່ເນື່ອງ ໃນກໍລະນີບໍ່ສາມາດເຊື່ອມຕໍ່ກັບເຊີເວີຫຼັກ ຫຼື ເຊີເວີສຳຮອງ.

ລະບົບເຊີເວີ ຕ້ອງນຳໃຊ້ລະບົບເຄືອຂ່າຍພາຍນອກ (Internet) ແລະ ລະບົບເຄືອຂ່າຍພາຍໃນ (Intranet) ເພື່ອເຊື່ອມຕໍ່ລະຫວ່າງລະບົບເຊີເວີຫຼັກ, ເຊີເວີສຳຮອງ, ລະບົບເຊີເວີສຳຮອງຂັ້ນແຂວງ ແລະ ຄອມພິວເຕີຂອງຜູ້ນຳໃຊ້. ການນຳໃຊ້ລະບົບເຄືອຂ່າຍພາຍນອກ ແລະ ລະບົບເຄືອຂ່າຍພາຍໃນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 16 ລະບົບເຄືອຂ່າຍ ເຊື່ອມຕໍ່ພາຍນອກ (Internet) ແລະ ພາຍໃນ (Intranet) ຂອງລະບົບຂໍ້ມູນ ຂ່າວສານທີ່ດິນ**

ລະບົບເຄືອຂ່າຍເຊື່ອມຕໍ່ພາຍນອກ (Internet) ແລະ ພາຍໃນ (Intranet) ຂອງລະບົບຂໍ້ມູນ ຂ່າວສານທີ່ດິນ ແມ່ນ ການເຊື່ອມຕໍ່ຖານຂໍ້ມູນ ຂ່າວສານທີ່ດິນ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຕ່ຂັ້ນສູນກາງຫາຂັ້ນທ້ອງຖິ່ນ ລວມທັງຂະແໜງການອື່ນທີ່ກ່ຽວຂ້ອງ ໂດຍນຳໃຊ້ເຄືອຂ່າຍຂອງບໍລິສັດຜູ້ໃຫ້ບໍລິການອິນເຕີເນັດ (ISP) ຂອງສອງບໍລິສັດຄຽງຄູ່ກັນຂຶ້ນໄປ. ລະບົບເຄືອຂ່າຍດັ່ງກ່າວ ຕ້ອງໄດ້ເຊົ່າໝາຍເລກທີ່ຢູ່ (Public IP) ຂອງແຕ່ລະບໍລິສັດ ເພື່ອຮັບປະກັນໃຫ້ລະບົບມີນຳໃຊ້ໄດ້ຢ່າງປົກກະຕິ ຊຶ່ງໄດ້ກຳນົດເອົາຄວາມໄວຂອງເຊີເວີຫຼັກ ແລະ ເຊີເວີສຳຮອງ ແມ່ນ 25/100 Mbps ຕໍ່ໜຶ່ງເຄືອຂ່າຍ, ສຳລັບເຊີເວີຂັ້ນແຂວງ ກຳນົດເອົາຄວາມໄວ 10/100 Mbps ຕໍ່ໜຶ່ງເຄືອຂ່າຍ.

**ມາດຕາ 17 ລະບົບເຄືອຂ່າຍພາຍໃນຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (Local Area Network)**

ລະບົບເຄືອຂ່າຍພາຍໃນຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (Local Area Network) ແມ່ນ ນຳໃຊ້ຢູ່ພາຍກົມທີ່ດິນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ໜ່ວຍງານຂຶ້ນທະບຽນອອກໃບຕາດິນ. ການນຳໃຊ້ເຄືອຂ່າຍດັ່ງກ່າວ ໃຫ້ມີຄວາມໄວອິນເຕີເນັດ ຂັ້ນຕ່ຳ 10/30 Mbps, ມີການຕິດຕັ້ງອຸປະກອນເຊື່ອມຕໍ່ (Router) ແລະ ລະບົບການປ້ອງກັນ (Firewall) ເພື່ອຂະຫຍາຍການເຊື່ອມຕໍ່ລະບົບຂໍ້ມູນ ຂ່າວສານທີ່ດິນ ແລະ ສາມາດໃຫ້ຜູ້ນຳໃຊ້ເຂົ້າເຖິງຖານຂໍ້ມູນ ຂ່າວສານທີ່ດິນໄດ້.

**ມາດຕາ 18 ການຄຸ້ມຄອງບັນຊີຜູ້ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ**

ການຄຸ້ມຄອງບັນຊີຜູ້ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ແມ່ນ ການກຳນົດສິດໃນການເຂົ້າເຖິງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ຕາມພາລະບົດບາດ ແລະ ຂອບເຂດສິດຂອງແຕ່ລະພາກສ່ວນ ລວມທັງຜູ້ນຳໃຊ້ທົ່ວໄປ ເພື່ອຮັບປະກັນໃຫ້ຂໍ້ມູນ ຂ່າວສານທີ່ດິນ ມີຄວາມປອດໄພ ແລະ ປ້ອງກັນການທຳລາຍຂໍ້ມູນດັ່ງກ່າວ.

ບັນຊີຜູ້ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ປະກອບມີ ດັ່ງນີ້:

1. ຜູ້ຄຸ້ມຄອງລະບົບຂັ້ນໜຶ່ງ (Super Admin);

2. ຜູ້ຄຸ້ມຄອງລະບົບຂັ້ນສອງ (Admin);
3. ຜູ້ນຳໃຊ້ສະເພາະດ້ານ (Specific User);
4. ຜູ້ນຳໃຊ້ທົ່ວໄປ (General User).

ການເຜີຍແຜ່ຂໍ້ມູນ ຂ່າວສານທີ່ດິນ ຕ້ອງໄດ້ມີການຄົ້ນຄ້ວາ ແລະ ກົນກອງລະອຽດ ຂໍ້ມູນໃດຄວນເປີດເຜີຍ ແລະ ຂໍ້ມູນໃດຄວນຮັກສາເປັນຄວາມລັບ.

**ມາດຕາ 19 ຜູ້ຄຸ້ມຄອງລະບົບຂັ້ນໜຶ່ງ (Super Admin)**

ຜູ້ຄຸ້ມຄອງລະບົບຂັ້ນໜຶ່ງ (Super Admin) ແມ່ນ ບັນຊີຂອງຜູ້ຄຸ້ມຄອງລະບົບຖານຂໍ້ມູນ ຂ່າວສານທີ່ດິນ ຢ່າງລວມສູນໃນຂອບເຂດທົ່ວປະເທດ ທີ່ໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມການສະເໜີຂອງຫົວໜ້າກົມທີ່ດິນ ຊຶ່ງມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງລະບົບຖານຂໍ້ມູນ ຂ່າວສານທີ່ດິນ ໃນລະດັບສູງສຸດ ເປັນຕົ້ນ ສ້າງ, ປັບປຸງ, ດັດແກ້, ລຶບຂໍ້ມູນ, ສ້າງບັນຊີໃນການຄຸ້ມຄອງ ແລະ ນຳໃຊ້ຢູ່ໃນລະບົບຖານຂໍ້ມູນ ຂ່າວສານທີ່ດິນ ພ້ອມທັງກຳນົດສິດໃຫ້ທຸກພາກສ່ວນເຂົ້າເຖິງຖານຂໍ້ມູນດັ່ງກ່າວ ແລະ ຕິດຕາມ ກວດກາ ການເຄື່ອນໄຫວຕາມພາລະບົດບາດ ແລະ ຂອບເຂດສິດ ຂອງແຕ່ລະພາກສ່ວນ.

**ມາດຕາ 20 ຜູ້ຄຸ້ມຄອງລະບົບຂັ້ນສອງ (Admin)**

ຜູ້ຄຸ້ມຄອງລະບົບຂັ້ນສອງ (Admin) ແມ່ນ ບັນຊີທີ່ສ້າງຂຶ້ນເພື່ອຊ່ວຍວຽກບັນຊີຜູ້ຄຸ້ມຄອງລະບົບຂັ້ນໜຶ່ງ ໃນການຄຸ້ມຄອງລະບົບຂໍ້ມູນ ຂ່າວສານທີ່ດິນ ຊຶ່ງປະກອບມີ ຜູ້ຄຸ້ມຄອງລະບົບຂັ້ນສອງ ຢູ່ຂັ້ນສູນກາງ ຖືກແຕ່ງຕັ້ງໂດຍຫົວໜ້າກົມທີ່ດິນ ແລະ ຜູ້ຄຸ້ມຄອງລະບົບຂັ້ນສອງ ຢູ່ຂັ້ນແຂວງ ຖືກແຕ່ງຕັ້ງໂດຍຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ.

ຜູ້ຄຸ້ມຄອງລະບົບຂັ້ນສອງ (Admin) ສາມາດປະຕິບັດສິດ ແລະ ໜ້າທີ່ ຕາມການກຳນົດສິດຂອງຜູ້ຄຸ້ມຄອງລະບົບຂັ້ນໜຶ່ງ ເປັນຕົ້ນ ສ້າງ, ປັບປຸງ, ດັດແກ້, ລຶບຂໍ້ມູນ, ກຳນົດ ແລະ ຍົກເລີກສິດໃນການເຂົ້າເຖິງຖານຂໍ້ມູນ ຂ່າວສານທີ່ດິນ ຂອງຜູ້ນຳໃຊ້ສະເພາະດ້ານ (Specific User) ແລະ ຜູ້ນຳໃຊ້ທົ່ວໄປ (General User) ພ້ອມທັງ ຕິດຕາມ ກວດກາການ ເຄື່ອນໄຫວຂອງຜູ້ນຳໃຊ້ ຕາມຂອບເຂດສິດຂອງຕົນ.

**ມາດຕາ 21 ຜູ້ນຳໃຊ້ສະເພາະດ້ານ (Specific User)**

ຜູ້ນຳໃຊ້ສະເພາະດ້ານ (Specific User) ແມ່ນ ບັນຊີທີ່ສ້າງຂຶ້ນ ເພື່ອນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ຢູ່ຂັ້ນສູນກາງ, ແຂວງ ແລະ ຂັ້ນເມືອງ ຮັບໃຊ້ວຽກງານທະບຽນທີ່ດິນ, ສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ການເຊົ່າ ແລະ ສຳປະທານທີ່ດິນຂອງລັດ, ການຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນ ຊຶ່ງຈະຕ້ອງໄດ້ລົງທະບຽນຜູ້ນຳໃຊ້ ໃນການເຂົ້າເຖິງຖານຂໍ້ມູນ ຂ່າວສານທີ່ດິນ ຕາມຂອບເຂດສິດຂອງຕົນ.

ຜູ້ນຳໃຊ້ສະເພາະດ້ານ (Specific User) ປະກອບມີ ຜູ້ນຳໃຊ້ສະເພາະດ້ານຂັ້ນສູນກາງ ຊຶ່ງຖືກແຕ່ງຕັ້ງໂດຍຫົວໜ້າກົມທີ່ດິນ ແລະ ຜູ້ນຳໃຊ້ສະເພາະດ້ານຂັ້ນແຂວງ ແລະ ຂັ້ນເມືອງ ຊຶ່ງຖືກແຕ່ງຕັ້ງໂດຍຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ.

**ມາດຕາ 22 ຜູ້ນຳໃຊ້ທົ່ວໄປ (General User)**

ຜູ້ນຳໃຊ້ທົ່ວໄປ (General User) ແມ່ນ ບັນຊີທີ່ສ້າງຂຶ້ນສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ຂໍ້ມູນ ຂ່າວສານທີ່ດິນ ຊຶ່ງສາມາດເຂົ້າເຖິງຂໍ້ມູນ ຂ່າວສານດັ່ງກ່າວໄດ້ ໂດຍໄດ້ຮັບສິດສະເພາະທີ່ໄດ້ກຳນົດໃຫ້ຢູ່ໃນລະບົບຂໍ້ມູນ ຂ່າວສານທີ່ດິນ. ການເຂົ້າເຖິງລະບົບຂໍ້ມູນ ຂ່າວສານດັ່ງກ່າວ ສາມາດເຂົ້າເຖິງໄດ້ໂດຍບໍ່ເສຍ ຫຼື ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

ສຳລັບການເຂົ້າເຖິງຂໍ້ມູນ ຂ່າວສານທີ່ດິນທົ່ວໄປ ທີ່ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່ຈາກກົມທີ່ດິນ ແມ່ນສາມາດເຂົ້າເຖິງໄດ້ ໂດຍບໍ່ຈຳເປັນຕ້ອງມີບັນຊີຜູ້ນຳໃຊ້ທົ່ວໄປ.

## ໝວດທີ 5
## ການຕິດຕາມ ກວດກາ
## ແລະ ມາດຕະການປ້ອງກັນລະບົບຂໍ້ມູນ ຂ່າວສານທີ່ດິນ

**ມາດຕາ 23 ການຕິດຕາມ ກວດກາລະບົບຂໍ້ມູນ ຂ່າວສານທີ່ດິນ**

ການຕິດຕາມ ກວດກາ ລະບົບຂໍ້ມູນ ຂ່າວສານທີ່ດິນ ແມ່ນ ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານກ່ຽວກັບລະບົບໂປຣແກຣມຂໍ້ມູນ ຂ່າວສານທີ່ດິນ, ລະບົບເຊີເວີ ແລະ ຜູ້ນຳໃຊ້ລະບົບຂໍ້ມູນ ຂ່າວສານທີ່ດິນ ເພື່ອຮັບປະກັນຄວາມປອດໄພ, ຖືກຕ້ອງ, ຊັດເຈນ, ທັນສະໄໝ, ວ່ອງໄວ ແລະ ສາມາດກວດສອບໄດ້ ລວມທັງລະບົບການເຊື່ອມໂຍງ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ.

ການຕິດຕາມ ກວດກາ ລະບົບຂໍ້ມູນ ຂ່າວສານທີ່ດິນ ໄດ້ແບ່ງຄວາມຮັບຜິດຊອບ ດັ່ງນີ້:

1. ກົມທີ່ດິນ ຮັບຜິດຊອບຕິດຕາມ ກວດກາ ລະບົບຂໍ້ມູນ ຂ່າວສານທີ່ດິນ ໃນຂອບເຂດທົ່ວປະເທດ ຕະຫຼອດ ຊາວສີ່ ຊົ່ວໂມງ ເປັນຕົ້ນ ລະບົບເຊີເວີຫຼັກ, ລະບົບເຊີເວີສຳຮອງ, ລະບົບຖານຂໍ້ມູນ ຂ່າວສານທີ່ດິນ, ອຸປະກອນເຊື່ອມຕໍ່, ໂປຣແກຣມປ້ອງກັນໄວຣັດ ແລະ ການປ້ອງກັນຄວາມປອດໄພ ຂອງລະບົບຂໍ້ມູນ ຂ່າວສານທີ່ດິນ ໃນກໍລະນີເກີດບັນຫາໃດໜຶ່ງ ໃຫ້ດຳເນີນການແກ້ໄຂຢ່າງທັນການ. ຖ້າຫາກວ່າບໍ່ສາມາດແກ້ໄຂໄດ້ກໍໃຫ້ປະສານສົມທົບກັບຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດຳເນີນການແກ້ໄຂ;

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ຮັບຜິດຊອບຕິດຕາມ ກວດກາ ລະບົບຂໍ້ມູນ ຂ່າວສານທີ່ດິນ ໃນຂອບເຂດຄວາມຮັບຜິດຊອບຂອງແຂວງ, ນະຄອນຫຼວງ ເປັນຕົ້ນ ເຊີເວີສຳຮອງຂໍ້ມູນຂັ້ນແຂວງ, ລະບົບເຄືອຂ່າຍພາຍໃນແຂວງ (Local Area Network), ຄອມພິວເຕີ ແລະ ໂປຣແກຣມປ້ອງກັນໄວຣັດຂອງຜູ້ໃຊ້ງານ ໃນກໍລະນີເກີດບັນຫາໃດໜຶ່ງ ໃຫ້ດຳເນີນການແກ້ໄຂຢ່າງທັນການ. ຖ້າຫາກບໍ່ສາມາດແກ້ໄຂໄດ້ຕ້ອງປະສານສົມທົບກົມທີ່ດິນ ເພື່ອດຳເນີນການແກ້ໄຂ.

3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຮັບຜິດຊອບຕິດຕາມ ກວດກາ ລະບົບຂໍ້ມູນ ຂ່າວສານທີ່ດິນ ໃນຂອບເຂດຄວາມຮັບຜິດຊອບຂອງເມືອງ, ເທດສະບານ, ນະຄອນ ເປັນຕົ້ນ ລະບົບເຄືອຂ່າຍ ຂັ້ນເມືອງ (Local Area Network), ຄອມພິວເຕີ ແລະ ໂປຣແກຣມປ້ອງກັນໄວຣັດຂອງຜູ້ໃຊ້ງານ. ໃນກໍລະນີເກີດບັນຫາໃດໜຶ່ງ ໃຫ້ດຳເນີນການແກ້ໄຂຢ່າງທັນການ. ຖ້າຫາກບໍ່ສາມາດແກ້ໄຂໄດ້ຕ້ອງປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເພື່ອດຳເນີນການແກ້ໄຂ.

ສຳລັບຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນຖານະເປັນຜູ້ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນເຮັດໜ້າທີ່ໃນການຊຸກຍູ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດລະບົບຂໍ້ມູນ ຂ່າວສານທີ່ດິນ ສາມ ເດືອນຕໍ່ຄັ້ງ. ໃນກໍລະນີເກີດເຫດການສຸກເສີນ ຫຼື ມີຄວາມຈຳເປັນ ກໍສາມາດດຳເນີນການຕິດຕາມ ກວດກາໄດ້.

**ມາດຕາ 24 ມາດຕະການປ້ອງກັນລະບົບຂໍ້ມູນ ຂ່າວສານທີ່ດິນ**

ໃນການປ້ອງກັນລະບົບຂໍ້ມູນ ຂ່າວສານທີ່ດິນ ຜູ້ຄຸ້ມຄອງຕ້ອງປະຕິບັດມາດຕະການ ດັ່ງນີ້:

1. ຈັດລະດັບຄວາມປອດໄພຂອງຂໍ້ມູນ ຂ່າວສານທີ່ດິນ;
2. ການເກັບຮັກສາຂໍ້ມູນ ຂ່າວສານທີ່ດິນ;

3. ຄວາມປອດໄພໃນການເຂົ້າເຖິງຂໍ້ມູນ ຂ່າວສານທີ່ດິນ;

4. ການເຂົ້າລະຫັດຄວາມປອດໄພຂອງຂໍ້ມູນ ຂ່າວສານທີ່ດິນ;

5. ການຕອບໂຕ້ການບຸກລຸກຂໍ້ມູນ ຂ່າວສານທີ່ດິນ.

**ມາດຕາ 25 ຈັດລະດັບຄວາມປອດໄພຂອງລະບົບຂໍ້ມູນ ຂ່າວສານທີ່ດິນ**

ໃນການຈັດລະດັບຄວາມປອດໄພຂອງຂໍ້ມູນ ຂ່າວສານທີ່ດິນ ຕ້ອງປະຕິບັດ ດັ່ງນີ້:

1. ລະດັບ ໜຶ່ງ ເມື່ອຂໍ້ມູນ ຖືກທຳລາຍ ຫຼື ເປີດເຜີຍ ເຮັດໃຫ້ສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຖືກເສຍຫາຍ;

2. ລະດັບ ສອງ ເມື່ອຂໍ້ມູນ ຖືກທຳລາຍ ຫຼື ເປີດເຜີຍ ເຮັດໃຫ້ສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຖືກເສຍຫາຍຢ່າງຮ້າຍແຮງ ຫຼື ສ້າງຜົນກະທົບໃຫ້ແກ່ສ່ວນລວມ;

3. ລະດັບ ສາມ ເມື່ອຂໍ້ມູນ ຖືກທຳລາຍ ຫຼື ເປີດເຜີຍ ເຮັດໃຫ້ຂະບວນການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນທີ່ດິນ, ຈົດທະບຽນທີ່ດິນ ແລະ ການບໍລິການທີ່ດິນ ຖືກເສຍຫາຍ.

**ມາດຕາ 26 ການເກັບຮັກສາຂໍ້ມູນ ຂ່າວສານທີ່ດິນ**

ໃນການເກັບຮັກສາຂໍ້ມູນ ຂ່າວສານທີ່ດິນ ຕ້ອງປະຕິບັດ ດັ່ງນີ້:

1. ມີໜ່ວຍງານ ຫຼື ພະນັກງານທີ່ຮັບຜິດຊອບ ຄຸ້ມຄອງຄວາມປອດໄພຂໍ້ມູນ ຂ່າວສານທີ່ດິນ ສະເພາະ;

2. ສ້າງລະບົບເກັບກຳ, ນຳໃຊ້ຂໍ້ມູນ, ລະບົບຄຸ້ມຄອງຄວາມປອດໄພ ແລະ ອື່ນໆທີ່ກ່ຽວຂ້ອງ;

3. ມີລະບົບເຕັກນິກປົກປ້ອງຂໍ້ມູນທີ່ເໝາະສົມກັບຂະໜາດຂອງຂໍ້ມູນ ຂ່າວສານທີ່ດິນ;

4. ກວດຄືນການລຶບ ແລະ ທຳລາຍຂໍ້ມູນ ຂ່າວສານທີ່ດິນ;

5. ບັນທຶກຂໍ້ມູນດ້ວຍເຈ້ຍ, ແສງ, ແມ່ເຫຼັກ ຫຼື ວິທີການອື່ນ ແລະ ນຳໃຊ້ວິທີການທີ່ເໝາະສົມໃນການເກັບຮັກສາ;

6. ກວດສອບ ແລະ ປະເມີນຄວາມສ່ຽງຕໍ່ລະບົບຂໍ້ມູນ ຢ່າງໜ້ອຍປີລະຄັ້ງ ແລະ ແກ້ໄຂບັນຫາທີ່ກວດພົບ ພ້ອມທັງປັບປຸງລະບົບໃຫ້ມີຄວາມປອດໄພ;

7. ກວດສອບການເຂົ້າເຖິງລະບົບຖານຂໍ້ມູນ ຂ່າວສານທີ່ດິນ ແລະ ປ້ອງກັນການບຸກລຸກ, ໄວຣັດ ຫຼື ຄວາມສ່ຽງອື່ນ ທີ່ມີລັກສະນະຄ້າຍຄືກັນ ແລະ ອື່ນໆ;

8. ແກ້ໄຂບັນຫາຮີບດ່ວນຕໍ່ເຫດການທີ່ກໍ່ໃຫ້ເກີດ ຫຼື ອາດກໍ່ໃຫ້ເກີດຜົນກະທົບຮ້າຍແຮງທັນທີ ທີ່ໄດ້ຮັບອະນຸຍາດ ຫຼື ໄດ້ຮັບລາຍງານການສືບສວນ-ສອບສວນ ຂອງໜ່ວຍງານຄຸ້ມຄອງຄວາມປອດໄພຂໍ້ມູນ ຫຼື ໜ່ວຍງານອື່ນທີ່ກ່ຽວຂ້ອງ;

9. ປ້ອງກັນຂໍ້ມູນ ຂ່າວສານທີ່ດິນ ເພື່ອບໍ່ໃຫ້ບຸກຄົນທີ່ບໍ່ໄດ້ຮັບການອະນຸຍາດເຂົ້າເຖິງ, ນຳໃຊ້, ສຳເນົາ, ເປີດເຜີຍ, ປ່ຽນແປງ ແລະ ກຳຈັດຂໍ້ມູນ.

**ມາດຕາ 27 ຄວາມປອດໄພໃນການເຂົ້າເຖິງຂໍ້ມູນ ຂ່າວສານທີ່ດິນ**

ຜູ້ຄຸ້ມຄອງລະບົບຂັ້ນໜຶ່ງ ຕ້ອງກຳນົດມາດຕະການຄວາມປອດໄພ ໃນການເຂົ້າເຖິງຂໍ້ມູນ ຂ່າວສານທີ່ດິນ ເພື່ອໃຫ້ເຈົ້າຂອງຂໍ້ມູນສາມາດເຂົ້າຂໍ້ມູນຂອງຕົນຢ່າງປອດໄພ.

ຜູ້ຄຸ້ມຄອງລະບົບຂັ້ນສອງ ຕ້ອງອຳນວຍຄວາມສະດວກໃຫ້ແກ່ເຈົ້າຂອງຂໍ້ມູນໃນການຕິດຕາມ ກວດກາ, ນຳໃຊ້ ແລະ ຄົ້ນຫາຂໍ້ມູນຢ່າງວ່ອງໄວ, ປອດໄພ ແລະ ທັນກັບສະພາບການ.

ຜູ້ນຳໃຊ້ສະເພາະດ້ານ ຕ້ອງຮັບຜິດຊອບໃນການເກັບຮັກສາ, ປ່ຽນແປງ ແລະ ປ້ອງກັນລະຫັດຜ່ານຂອງຕົນ ເພື່ອປ້ອງກັນບໍ່ໃຫ້ຜູ້ອື່ນເຂົ້າເຖິງຂໍ້ມູນທີ່ຕົນຮັບຜິດຊອບ.

ຜູ້ນຳໃຊ້ທົ່ວໄປ ຮັບຜິດຊອບນຳໃຊ້ລະຫັດຜ່ານຂອງຕົນ ຕາມການອະນຸຍາດຂອງຜູ້ຄຸ້ມຄອງລະບົບຂັ້ນສອງ ທີ່ຕົນເອງໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ການເຂົ້າລະຫັດຄວາມປອດໄພ ຂອງຂໍ້ມູນ ຂ່າວສານທີ່ດິນ**

ໃນການສົ່ງ ຫຼື ໂອນຂໍ້ມູນ ຂ່າວສານທີ່ດິນ ທີ່ສຳຄັນ ເປັນຕົ້ນ ຖານຂໍ້ມູນທະບຽນທີ່ດິນ, ຖານຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ຖານຂໍ້ມູນການເຊົ່າ ແລະ ສຳປະທານທີ່ດິນຂອງລັດ, ຖານຂໍ້ມູນແຜນຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນ ຕ້ອງເຂົ້າລະຫັດຄວາມປອດໄພຂໍ້ມູນ ແລະ ຕ້ອງໃຊ້ໃບຮັບຮອງເອເລັກໂຕຣນິກທີ່ຖືກຮັບຮອງໂດຍກະຊວງເທັກໂນໂລຊີ ແລະ ການສື່ສານ ເພື່ອປ້ອງກັນບໍ່ໃຫ້ບຸກຄົນທີ່ບໍ່ໄດ້ຮັບອະນຸຍາດເຂົ້າເຖິງ, ອ່ານ, ທຳລາຍ, ນຳໃຊ້, ເປີດເຜີຍ, ສົ່ງ, ໂອນ, ປັບປຸງ, ລຶບ, ປ່ຽນແປງ ແລະ ກະທຳອື່ນໆ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ.

**ມາດຕາ 29 ການປ້ອງກັນການບຸກລຸກລະບົບຂໍ້ມູນ ຂ່າວສານທີ່ດິນ**

ການປ້ອງກັນການບຸກລຸກລະບົບຂໍ້ມູນ ຂ່າວສານທີ່ດິນ ແມ່ນ ຄວາມຮັບຜິດຊອບຂອງຜູ້ຄຸ້ມຄອງລະບົບຂັ້ນໜຶ່ງ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງນຳໃຊ້ວິທີການສະກັດກັ້ນ ແລະ ແກ້ໄຂ ເມື່ອໄດ້ຮັບການແຈ້ງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການສົ່ງຂໍ້ມູນທີ່ອາດກໍ່ໃຫ້ເກີດ ຫຼື ສ້າງຄວາມເສຍຫາຍແກ່ລະບົບຂໍ້ມູນ ຂ່າວສານທີ່ດິນ;

2. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລວບລວມຂໍ້ມູນ, ຜົນກະທົບ ແລະ ທີ່ມາຂອງການບຸກລຸກ ເຊັ່ນ ວັນ, ເວລາ, ສະຖານທີ່, ຮູບແບບ, ບໍລິມາດການບຸກລຸກ, ຜົນກະທົບ ແລະ ທີ່ມາຂອງການບຸກລຸກ ເພື່ອແກ້ໄຂ.

## ໝວດທີ 6
## ການບໍລິການຂໍ້ມູນ ຂ່າວສານທີ່ດິນ

**ມາດຕາ 30 ການບໍລິການຂໍ້ມູນ ຂ່າວສານທີ່ດິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດນຳໃຊ້ການບໍລິການຂໍ້ມູນ ຂ່າວສານທີ່ດິນ ຜ່ານທາງເວບໄຊ ແລະ ແອັບພຣິເຄເຊິນ (Application) ເທິງມືຖື.

ການບໍລິການຂໍ້ມູນຂ່າວສານທີ່ດິນ ປະກອບມີປະເພດ ດັ່ງນີ້:

1. ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນທົ່ວໄປ;
2. ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນສະເພາະ.

**ມາດຕາ 31 ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນທົ່ວໄປ**

ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນທົ່ວໄປ ແມ່ນ ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນ ທີ່ສາມາດເປີດເຜີຍໄດ້ ເຊັ່ນ ກົດໝາຍທີ່ດິນ, ນິຕິກຳໃຕ້ກົດໝາຍ ແລະ ຂໍ້ມູນອື່ນ ທີ່ໄດ້ຮັບອະນຸຍາດໃຫ້ເປີດເຜີຍ. ການໃຫ້ບໍລິການຂໍ້ມູນດັ່ງກ່າວ ແມ່ນບໍ່ໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 32 ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນສະເພາະ**

ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນສະເພາະ ແມ່ນ ການໃຫ້ບໍລິການຂໍ້ມູນ ຂ່າວສານທີ່ດິນ ເຊັ່ນ ຂໍ້ມູນກ່ຽວກັບຕອນດິນ ຂອງຜູ້ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນ, ເຂດປະເມີນລາຄາທີ່ດິນ, ຢັ້ງຢືນຄວາມຖືກຕ້ອງຂອງຕອນ

ດິນ ແລະ ຂໍ້ມູນອື່ນໆ ທີ່ໄດ້ຮັບອະນຸຍາດໃຫ້ບໍລິການ. ການໃຫ້ບໍລິການຂໍ້ມູນ ຂ່າວສານດັ່ງກ່າວ ຈະຕ້ອງໄດ້ຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ໂດຍຜ່ານເວບໄຊ ແລະ ແອບພຣິເຄເຊິນ (Application) ເທິງມືຖືໄດ້.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມທີ່ດິນ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 34 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ສິງຫາ 2024 ເປັນຕົ້ນໄປ.

**ລັດຖະມົນຕີ**

ລັດຖະມົນຕີ

**ນ.ບຸນຄໍາ ວໍລະຈິດ**